# ໃບແຈ້ງການ ແລະ ການຄົ້ນພົບກ່ຽວກັບຄວາມຮັບຜິດຊອບ
## Notice and Finding of Responsibility

ໃບແຈ້ງການ ແລະ ການຄົ້ນພົບກ່ຽວກັບຄວາມຮັບຜິດຊອບ (NFR) ໃບນີ້ໄດ້ຖືກສົ່ງໃຫ້ເປັນໃບແຈ້ງການເບື້ອງຕົ້ນຂອງທ່ານ ຫລື ຍ້ອນວ່າຈຳນວນຂອງການເຂົ້າຮ່ວມຂອງທ່ານໄດ້ປ່ຽນແປງຕັ້ງແຕ່ໃບ NFR ສຸດທ້າຍຫມູ່ໄດ້ຖືກສົ່ງອອກໄປ. ມັນເປັນການເຕືອນໃຈວ່າທ່ານມີຄວາມຮັບຜິດຊອບທີ່ຈະຕ້ອງຈ່າຍພາກສ່ວນນຶ່ງຂອງການເບິ່ງແຍງດູແລຂອງທ່ານຕາມທີ່ຖືກພິຈາຣະນາບອກໂດຍກົມສັງຄົມສົງເຄາະ ແລະ ສາທາຣະນະສຸກ (DSHS). ຈົ່ງເບິ່ງກົດຫມາຍ RCW 43.20B.430, 43.20B.435 ແລະ WAC 388-835-0940. ຈື່ໄວ້ວ່າ, ການເຂົ້າຮ່ວມຂອງທ່ານແມ່ນສ່ວນແບ່ງປະຈຳເດືອນຂອງຄ່າເບິ່ງແຍງດູແລຂອງທ່ານ, ການອູ້ມຊູ, ແລະ ການປິ່ນປົວຢູ່ທີ່ RHC. ທ່ານໄດ້ຖືກກຳນົດໃຫ້ຈ່າຍການເຂົ້າຮ່ວມຂອງທ່ານທຸກໆເດືອນ. ທ່ານຈະໄດ້ຮັບໃບແຈ້ງການເກັບເງິນປະຈຳເດືອນພ້ອມທັງຊອງເປົ່າສົ່ງກັບຄືນມາ ແລະ ບັດຈ່າຍເງິນ. ບັດຈ່າຍເງິນຕ້ອງຖືກລວມມານຳການຈ່າຍເງິນຂອງທ່ານ.

ຫ້ອງການບໍຣິການຊຸມນຸມຊົນ (CSO) ຂອງກົມ DSHS ໄດ້ຄິດໄລ່ຄວາມຮັບຜິດຊອບຂອງທ່ານໂດຍອີງຕາມກົດຫມາຍ WAC 388-513-1380 ແລະ ຈຳນວນນັ້ນໄດ້ຖືກລວມຢູ່ໃນຫນັງສືສະບັບນີ້.ຫ້ອງການ CSO ໄດ້ຄິດໄລ່ຄ່າຂອງການເຂົ້າຮ່ວມຂອງທ່ານໂດຍອີງຕາມການກວດເບິ່ງຊັບສິນດ້ານການເງິນຂອງທ່ານ.

### ເປັນຫຍັງມັນຈຶ່ງມີການປ່ຽນແປງ?

ຈຳນວນຂອງການເຂົ້າຮ່ວມຂອງທ່ານປ່ຽນແປງຍ້ອນວ່າຣາຍໄດ້ ແລະ ຣາຍຈ່າຍຂອງທ່ານປ່ຽນແປງ. ຫ້ອງການ CSO ໄດ້ຄິດໄລ່ຄ່າຂອງການເຂົ້າຮ່ວມໃຫມ່ຂອງທ່ານໂດຍອີງຕາມຣາຍຣະອຽດໃຫມ່ທີ່ໄດ້ຖືກສົ່ງມາໃຫ້ ແລະ ແຈ້ງບອກທ່ານກ່ຽວກັບການປ່ຽນແປງໃນການເຂົ້າຮ່ວມຂອງທ່ານ.

### ຖ້າຫາກວ່າຂ້ອຍບໍ່ເຫັນພ້ອມນຳ NFR ອັນນີ້ເດ?

ຖ້າຫາກວ່າທ່ານບໍ່ເຫັນພ້ອມນຳຫລືມີຄຳຖາມ,ທ່ານຈະໂທຫາເລກໂທຟຣີຂອງສູນກາງບໍຣິການປະຊາສັມພັນຂອງຫ້ອງການ CSO ໄດ້ທີ່ເລກ 1-877-501-2233 ເພື່ອຈະກວດເບິ່ງບັນຊີຂອງທ່ານຄືນ.

ຖ້າຫາກວ່າທ່ານຍັງບໍ່ເຫັນພ້ອມນຳຢູ່ແລະຢາກຈະອຸທອນໃບແຈ້ງການໃບນີ້,ທ່ານຈະຮ້ອງຂໍເອົາການຟັງເຣື່ອງຈາກອຳນາດການປົກຄອງໄດ້ພາຍໃນ 30 ວັນຂອງການໄດ້ຮັບໃບແຈ້ງການໃບນີ້.ຄຳຮ້ອງຂໍຂອງທ່ານຕ້ອງເປັນລາຍລັກອັກສອນ ແລະ ຖືກສົ່ງກັບຄືນມາພ້ອມທັງໂກປີ້ຂອງຫນັງສືສະບັບນີ້ໄປຫາທີ່ຢູ່ຕໍ່ລົງໄປນີ້:

ATTN: Office of Administrative Hearing (OAH)
PO Box 42489
Olympia, WA 98504-2489

ທ່ານຈະຖືກແຈ້ງບອກໂດຍທາງໄປສະນີ, ເມື່ອໃດ ແລະ ເວລາໃດທີ່ຈະໄປປາກົດຕົວສຳລັບການຟັງເຣື່ອງ. ຈ່າສານກົດຫມາຍອຳນາດການປົກຄອງຈະຟັງຄະດີຂອງທ່ານ ແລະ ທຳການຕັດສິນໂດຍອີງຕາມຣາຍຣະອຽດທີ່ທ່ານສະເນີມາ.

### ຖ້າຫາກວ່າຂ້ອຍຜິດພາດທີ່ຈະຈ່າຍເດ?

ຖ້າຫາກວ່າທ່ານຜິດພາດທີ່ຈະຈ່າຍຫນີ້ອັນນີ້,ກົມຈະທຳການກະທຳເກັບເງິນຂັ້ນຕໍ່ໄປໂດຍການຍື່ນການຜູກມັດໃສ່ຊັບສິນເຮືອນຊານຂອງທ່ານ, ການຍຶດເອົາຊັບສິນຂອງທ່ານລວມທັງແຕ່ບໍ່ຈຳກັດໄປເຖິງບັນຊີທະນາຄານ ແລະ/ຫລື ການຫັກເອົາເງິນເດືອນຂອງທ່ານ. ພວກເຮົາຍັງອາດຈະຮ້ອງຂໍໃຫ້ສານ ຫລື ພະແນກປົກຄອງຄວາມປອດພັຍຂອງສັງຄົມຫລືແຫລ່ງທີ່ມາຂອງຣາຍໄດ້ບ່ອນອື່ນໆທີ່ຈະແຕ່ງຕັ້ງສະຖານທີ່ເບິ່ງແຍງດູແລບ່ອນທີ່ທ່ານກຳລັງອາສັຍຢູ່ໃຫ້ເປັນຜູ້ຕາງຫນ້າອອກຊື່ເບີກເງິນຂອງທ່ານ. ກົມບໍ່ຢູ່ພາຍໃຕ້ຄວາມຮັບຜິດຊອບແນວໃດທີ່ຈະແຈ້ງບອກທ່ານກ່ຽວກັບການກະທຳຕໍ່ໄປຕ່າງໆ.